**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 483 /ຫຄຊກລ.ຄມ
ນະຄອນຫລວງວຽງຈັນ, ວັນທີ 19 ສິງຫາ 2023

# ບົດບັນທຶກກອງປະຊຸມ
## ວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນ ລບຕ ປະຈໍາໄຕມາດ 2 ປີ 2023

**I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ**

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນ ລບຕ ປະຈໍາໄຕມາດ 2 ປີ 2023 ທີ່ຫ້ອງປະຊຸມຂອງ ໂຮງແຮມແລນມາກ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ໂຈມແຍງ ແພງທອງສະຫວັດ, ຫົວໜ້າຫ້ອງການ ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກອົງການສະຫະປະຊາຊາດ, ຫົວໜ້າໜ່ວຍງານຄຸ້ມຄອງຂໍ້ມູນ, ໜ່ວຍງານຄຸ້ມຄອງການສໍາຫຼວດ - ກວດກູ້, ໜ່ວຍງານຄຸ້ມຄອງຄຸນນະພາບ, ວິຊາການໜ່ວຍງານຄຸ້ມຄອງຂໍ້ມູນ ແລະ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 10 ອົງການມະນຸດສະທໍາ (ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເອັມພີເອ, ອົງການຮາໂລທຣັສ, ອົງການແມັກປະຈໍາ ສປປ ລາວ, ອົງການ HI, ກອງກວດກູ້ເພື່ອມະນຸດສະທໍາກອງທັບ 58, ສູນການແພດຟື້ນຟູໜ້າທີ່ການ, ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ, ໂຄງການຮ່ວມມືດ້ານອົງຄະທຽມ ແລະ ເຄື່ອງຄໍ້າຊູ, ສະມາຄົມຄົນພິການແຫ່ງຊາດ), ບໍລິສັດມິນເຊີດເກັບກູ້ລະເບີດ ແລະ ບໍລິສັດເກຣດເກັບກູ້ລະເບີດ ແລະ ຊ່ຽວຊານຈາກບໍລິສັດເທທາເທັກ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈໍານວນ 36 ທ່ານ.

**II ຈຸດປະສົງ**

- ເພື່ອລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຂໍ້ມູນ ປະຈໍາໄຕມາດ
- ເພື່ອຮັບຟັງການລາຍງານ ຜົນການຈັດຕັ້ງປະຕິບັດ ແລະ ບັນຫາການປະຕິບັດງານການຄຸ້ມຄອງຂໍ້ມູນ ໃນໄຕມາດ 2 ປີ 2023
- ເພື່ອນໍາສະເໜີກ່ຽວກັບການນໍາໃຊ້ເຄື່ອງມື VPN (Virtual private Network) ໃນການສົ່ງບົດລາຍງານ , ທົດລອງໃຊ້ Dashboard ທີ່ສ້າງໃນ ArcGIS Online ເພື່ອການລາຍງານ ແລະ ເຄື່ອງມືການເກັບກໍາການລາຍງານຄວາມຄືບໜ້າປະຈໍາເດືອນ / Monthly Progress Report ທີ່ພັດທະນາຈາກເຄື່ອງມື Survey 123
- ນອກຈາກນັ້ນ ຍັງກໍານົດວິທີທາງແກ້ໄຂບັນຫາຕ່າງໆຮ່ວມກັນ

**III ເນື້ອໃນກອງປະຊຸມ**

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:45 ໂມງ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດ , ກອງປະຊຸມໄດ້ຮັບຊາບການລາຍງານ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

- ໜ່ວຍງານຄຸ້ມຄອງຂໍ້ມູນ ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຂໍ້ມູນ ປະຈໍາໄຕມາດ 2 ປີ 2023
- ອົງການປະຕິບັດງານ ທີ່ເຂົ້າຮ່ວມ ລາຍງານຜົນການຈັດຕັ້ງປະຕິບັດ ແລະ ບັນຫາການປະຕິບັດງານການຄຸ້ມຄອງຂໍ້ມູນ ໃນໄຕມາດ 2 ປີ 2023
- ໜ່ວຍງານຄຸ້ມຄອງຂໍ້ມູນ ນໍາສະເໜີກ່ຽວກັບການນໍາໃຊ້ເຄື່ອງມື VPN (Virtual private Network) ໃນການສົ່ງບົດລາຍງານ ແລະ ເຄື່ອງມື Dashboard ທີ່ພັດທະນາໃນໂປຣແກັມ ArcGIS online
- ຊ່ຽວຊານໂຄງການ ນໍາສະເໜີກ່ຽວກັບ ArcGIS online

- ໜ່ວຍງານຄຸ້ມຄອງຂໍ້ມູນ ນໍາສະເໜີການລາຍງານຄວາມຄືບໜ້າປະຈໍາເດືອນ Monthly Progress Report ທີ່ພັດທະນາຈາກເຄື່ອງມື Survey 123

## IV. ຂໍ້ຕົກລົງພາຍໃນກອງປະຊຸມ

1. ການປັບປຸງແບບຮ່າງບົດລາຍຂອງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ການໂຄສະນາ ໃຫ້ສົມທົບນໍາໜ່ວຍງານຄຸ້ມຄອງຂໍ້ມູນ. ພາຍຫຼັງສໍາເລັດແລ້ວ ໃຫ້ນໍາສະເໜີຕໍ່ກອງປະຊຸມວິຊາການ ຂອງຕົນ
2. ວຽກການຄຸ້ມຄອງຂໍ້ມູນກວດກາຄືນຂໍ້ມູນການສໍາຫຼວດກວດກູ້ ຂໍ້ມູນທີ່ບໍ່ສາມາດຕອບຕົວຊີ້ໄດ້ ໃຫ້ປັບປຸງຄືນ
3. ການແກ້ໄຂສະໜາມທັບຊ້ອນຢູ່ແຂວງຊຽງຂວາງ. ໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນ ຄຊກລ ລາຍງານຄວາມຄືບໜ້າໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງຮັບຊາບ
4. ໃຫ້ໜ່ວຍງານຄຸ້ມຄອງຄຸນນະພາບ ສະຫຼຸບ ແລະ ສົມທຽບຄືນ ລະຫວ່າງອົງການ ທີ່ລາຍງານໃນຖານຂໍ້ມູນ ແລະ ການລົງໄປກວດກາຄຸນນະພາບ
5. ໃຫ້ເອົາບັນຫາການເກີດອຸບັດຕິເຫດ ໃນການເກັບກໍາຂໍ້ມູນ ວ່າເຮັດວິທີໃດ ຂະບວນການລາຍງານຈຶ່ງມີຄວາມວ່ອງໄວ ໃຫ້ນໍາໄປປຶກສາໃນກອງປະຊຸມການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ
6. ໃຫ້ຖືເອົາຂໍ້ມູນໃນ Dashboard ໃນເວບໄຊຂອງຫ້ອງການ ຄຊກລ ເປັນທາງການ
7. ໃຫ້ຫ້ອງການ ຄກລ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກໍານົດເວລາໃນການແກ້ໄຂກ່ຽວກັບການເກັບກໍາບົດລາຍງານທີ່ບໍ່ມີໃນຖານຂໍ້ມູນ ເປັນແຕ່ລະໄລຍະ
8. ໃຫ້ມີກອງປະຊຸມວິຊາການລະຫວ່າງ ໜ່ວຍງານຄຸ້ມຄອງຂໍ້ມູນຂອງ ຄຊກລ ແລະ ຄກລ
9. ສະເໜີໃຫ້ນໍາເອົາບັນຫາ ພື້ນທີ່ຢືນຢັນວ່າມີລະເບີດລູກຫວ່ານ CHA ທີ່ມີຂະໜາດໃຫຍ່ ເຂົ້າໄປປຶກສາຫາລື ຢູ່ກອງປະຊຸມວິຊາການຄຸ້ມຄອງການສໍາຫຼວດ ແລະ ກວດກູ້
10. ການລາຍງານວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ໃຫ້ເອົາໄປປຶກສາລະອຽດ ເພາະຍັງມີຫຼາຍອົງການ ທີ່ປະຕິບັດງານ ແຕ່ຂໍ້ມູນບໍ່ທັນລາຍງານເຂົ້າຖານຂໍ້ມູນແຫ່ງຊາດ
11. ໃຫ້ຫ້ອງການ ຄຊກລ ຮ່າງໜັງສືຫາອົງການ ຮາໂລທັສ ເພື່ອໃຫ້ຊີ້ແຈງກ່ຽວກັບການທົດລອງ ຫຼື ນໍາໃຊ້ອຸປະກອນ. ເພື່ອໃຫ້ສອດຄ່ອງກັບລະບຽບການ
12. ຕົກລົງເຫັນດີນໍາໃຊ້ລະບົບການສົ່ງຂໍ້ມູນຜ່ານລະບົບ VPN (Virtual Private Network)
13. ຕົກລົງເຫັນດີ ໃຫ້ລາຍງານບົດລາຍງານຄວາມຄືບໜ້າປະຈໍາເດືອນ (Monthly Progress report) ຜ່ານແບບຟອມ ທີ່ພັດທະນາຈາກເຄື່ອງມື Survey 123
14. ແຕ່ງຕັ້ງຜູ້ປະສານງານກ່ຽວກັບການເສື່ອມສານບົດບາດຍິງຊາຍ ໃນຂະແໜງການ ລບຕ ແມ່ນ ທ່ານ ທອງເດືອນ ຈາກອົງການແມັກ ແລະ ນາງ ເມກຂະຫຼາ ຈາກຫ້ອງການ ຄຊກລ ເປັນຜູ້ປະສານງານໃນວຽກງານການຄຸ້ມຄອງຂໍ້ມູນ.

## V. ສະຫຼຸບ

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄໍາຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 16:00 ໂມງ ຂອງວັນທີ 15 ມິຖຸນາ 2023.

**ປະທານກອງປະຊຸມ** | **ໜ່ວຍງານຄຸ້ມຄອງຂໍ້ມູນ**

ຫ້ອງການ ຄຊກລ

ໂຈນແຍງ ແພງທອງສະຫວັດ